ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===----------

ກະຊວງປ້ອງກັນປະເທດ

ກົມໃຫຍ່ພະລາທິການກອງທັບ

ກົມອຸດສາຫະກຳປ້ອງກັນຊາດ

ເລກທີ 109 /ກອຊ

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2012

# ບົດແນະນຳກ່ຽວກັບ
# ລະບຽບການຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ

- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເລກທີ 2450/ກປທ, ລົງວັນທີ 5 ສິງຫາ 2010 ກ່ຽວກັບການຄຸ້ມຄອງວັດຖຸທາດລະເບີດອຸດສາຫະກຳ.

**ຫົວໜ້າກົມອຸດສາຫະກຳປ້ອງກັນຊາດ,**

**ກົມໃຫ່ຍພະລາທິການກອງທັບ, ກະຊວງປ້ອງກັນປະເທດ ອອກບົດແນະນຳດັ່ງນີ້:**

## ມາດຕາ 1 ຈຸດປະສົງ

ບົດແນະນຳສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າແບບບໍ່ອັດຕະໂນມັດ ຊຶ່ງຈຸດປະສົງຂອງການນຳໃຊ້ໃບອະນຸຍາດແມ່ນເພື່ອເປັນການຮັບປະກັນຄວາມປອດໄພຂອງປະຊາຊົນ, ຄວາມໝັ້ນຄົງຂອງຊາດ ແລະ ເປັນການປົກປັກຮັກສາສິ່ງແວດລ້ອມ.

## ມາດຕາ 2 ອະທິບາຍສັບ

"ວັດຖຸທາດລະເບີດອຸດສາຫະກຳ" ທີ່ໃຊ້ໃນບົດແນະນຳສະບັບນີ້ ແມ່ນວັດຖຸທາດລະເບີດ ທີ່ຖືກນຳໃຊ້ເຂົ້າໃນເປົ້າໝາຍອຸດສາຫະກຳ ເຊິ່ງລວມມີ: ທາດເຄມີດ່ຽວ ຫຼື ທາດເຄມີປະສົມ ທີ່ໄດ້ຜະລິດນຳໃຊ້ເພື່ອໃຫ້ເກີດປະຕິກິລິຍາການລະເບີດ ດ້ວຍການກະທົບຈາກການກະຕຸ້ນກົນລະສາດ, ຄວາມຮ້ອນ, ເຄມີ ຫຼື ໄຟຟ້າ, ແກັບແຕກ, ສາຍແຕກ, ສາຍຊະນວນ, ບຸດສະເຕີ ແລະ ບັນດາວັດຖຸທີ່ມີທາດລະເບີດເພື່ອໃຫ້ເກີດຜົນການກະຕຸ້ນໃນເບື້ອງຕົ້ນ ເຮັດໃຫ້ທາດລະເບີດອື່ນລະເບີດຂຶ້ນ ທີ່ໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 36.01 ; 36.02; 36.03 ແລະ 36.04 ຂອງສາລະບານອັດຕາພາສີຂອງ ສປປ ລາວ.

**ມາດຕາ 3 ຂອບເຂດການນຳໃຊ້**

ບົດແນະນຳສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ຢູ່ ສປປ ລາວ.

**ມາດຕາ 4 ສິດ ແລະ ເງື່ອນໄຂໃນການນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ**

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບສຳປະທານໂຄງການພັດທະນາ ຈາກລັດຖະບານແຫ່ງ ສປປ ລາວ ຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ມີສິດສະເໜີຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ໃນກໍລະນີ ມີຄວາມຈຳເປັນນຳໃຊ້ວັດຖຸທາດລະເບີດອຸດສາຫະກຳເຂົ້າໃນໂຄງການດັ່ງກ່າວ ແລະ ຈະຕ້ອງປະຕິບັດຕາມລະບຽບການຄຸ້ມຄອງວັດຖຸທາດລະເບີດອຸດສາຫະກຳຢູ່ ສປປ ລາວ.

**ມາດຕາ 5 ການຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ**

ການນຳເຂົ້າວັດຖຸທາດລະເບີດ ອຸດສາຫະກຳຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າຈາກ ກົມອຸດສາຫະກຳປ້ອງກັນຊາດ, ກົມໃຫຍ່ພະລາທິການກອງທັບ, ກະຊວງປ້ອງກັນປະເທດ.

**ມາດຕາ 6 ເອກະສານປະກອບຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ**

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າ ວັດຖຸທາດລະເບີດອຸດສາຫະກຳປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ວັດຖຸທາດລະເບີດອຸດສາຫະກຳ;
2. ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ;
3. ແຜນການນຳໃຊ້ວັດຖຸທາດລະເບີດສະເພາະແຕ່ລະໂຄງການ ຫຼື ແຜນນຳໃຊ້ວັດຖຸທາດລະເບີດ ປະຈຳປີ ;
4. ໃບແຈ້ງລາຄາສິນຄ້າ ແລະ ໃບຫຸ້ມຫໍ່; ແລະ
5. ມີໃບສັນຍາຊື້-ຂາຍ.

**ມາດຕາ 7 ໃບອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ**

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງໃບອະນຸຍາດນຳເຂົ້າວັດຖຸທາດລະເບີດ ອຸດສາຫະກຳໃຫ້ປະຕິບັດຕາມດຳລັດ 180/ນຍ, ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

ການພິຈາລະນາອອກໃບອະນຸຍາດນຳເຂົ້າ ວັດຖຸທາດລະເບີດອຸດສາຫະກຳ ແມ່ນຂຶ້ນກັບດຸນພິນິດຂອງ ກົມອຸດສາຫະກຳປ້ອງກັນຊາດ, ກົມໃຫຍ່ພະລາທິການກອງທັບ, ກະຊວງປ້ອງກັນປະເທດ.

**ມາດຕາ 8 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງໃບອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ແມ່ນໃຫ້ອີງຕາມລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ໄດ້ວາງອອກໃນແຕ່ລະໄລຍະ.

**ມາດຕາ 9 ການສະໜອງເອກະສານໃນເວລານຳເຂົ້າວັດຖຸທາດລະເບີດອຸດສາຫະກຳ**

ໃນເວລານຳເຂົ້າວັດຖຸທາດລະເບີດ ອຸດສາຫະກຳຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າທີ່ອອກພາຍໃຕ້ບົດແນະນຳສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ກົມອຸດສາຫະກຳປ້ອງກັນຊາດ,ກະຊວງປ້ອງກັນປະເທດ ຈະເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ໃຫ້ລອດຄ່ອງ ແລະ ມີປະສິດທິຜົນ.

**ມາດຕາ 11 ຜົນສັກສິດ**

ບົດແນະນຳສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມອຸດສາຫະກຳປ້ອງກັນຊາດ,

ກະຊວງປ້ອງກັນປະເທດ
ກົມອຸດສາຫະກຳປ້ອງກັນຊາດ

ກິລາກອນ ບຸນນະຜົນ